ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 359/ນຍ

ນະຄອນຫຼວງວຽງຈັນ, ວັນທີ 22-11-2023

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 223/ພນ, ລົງວັນທີ 03 ພະຈິກ 2023.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ, ແລະ ແບບແຜນວິທີເຮັດວຽກ ຂອງອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃຫ້ເປັນການຈັດຕັ້ງສາມາດເຄື່ອນໄຫວມີຄວາມເຂັ້ມແຂງ, ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ກາຍເປັນຕົວເມືອງທັນສະໄໝ ເຮັດໃຫ້ການລົງທຶນມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ, ໂປ່ງໃສ, ຮັບປະກັນສິດຜົນປະໂຫຍດຂອງລັດ, ປະຊາຊົນ, ຜູ້ພັດທະນາ ແລະ ຜູ້ລົງທຶນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ ຂຽນເປັນຕົວອັກສອນຫຍໍ້ວ່າ "ອຄຂສ" ແມ່ນອົງການຈັດຕັ້ງສະເພາະກິດໜຶ່ງທີ່ຂຶ້ນກັບລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ຊຶ່ງເປັນອົງການບໍລິຫານທີ່ຄ້າຍຄືອົງການປົກຄອງ

ທ້ອງຖິ່ນ, ມີຖານະທຽບເທົ່າກັບເມືອງ, ເທດສະບານ, ນະຄອນ; ເປັນໃຈກາງປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານການຄຸ້ມຄອງເຂດເສດຖະກິດພິເສດສາມຫຼ່ຽມຄຳ ຢ່າງຮອບດ້ານ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ມະຕິ, ຄຳສັ່ງ ຂອງລັດຖະບານ ແລະ ນາຍົກລັດຖະມົນຕີ ວາງອອກຢ່າງເຂັ້ມງວດ;
2. ຄົ້ນຄວ້າ-ສັງລວມ ສະພາບ, ທ່າແຮງ ແລະ ເງື່ອນໄຂຄວາມສາມາດຕົວຈິງ ດ້ານເສດຖະກິດ, ການຄ້າ, ການລົງທຶນ, ວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ ແລະ ອື່ນໆ ເພື່ອເປັນຂໍ້ມູນໃນການກຳນົດທິດທາງໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແຕ່ລະໄລຍະ;
3. ຄົ້ນຄວ້າ, ສ້າງແຜນຍຸດທະສາດ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ໂດຍໃຫ້ສອດຄ່ອງກັບແນວທາງນະໂຍບາຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງພັກ ແລະ ລະບຽບກົດໝາຍຂອງລັດຖະບານ ແຫ່ງ ສປປ ລາວ;
4. ຄົ້ນຄວ້າ, ສ້າງແຜນການເຄື່ອນໄຫວ, ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານແຮງງານໂດຍໃຫ້ສອດ ຄ່ອງກັບແນວທາງນະໂຍບາຍຄຸ້ມຄອງແຮງງານ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການແຕ່ລະໄລຍະ;
5. ສ້າງແຜນການ, ໂຄງການ ແລະ ປະຕິບັດວຽກງານຄຸ້ມຄອງຄຸ້ມຄອງພົນລະເມືອງຢ່າງເປັນລະບົບຢູ່ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສອດຄ່ອງກັບລະບຽບການ ຂອງ ສປປ ລາວ;
6. ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງທີ່ດິນ, ການນຳໃຊ້ທີ່ດິນ, ການຄຸ້ມຄອງສິ່ງແວດລ້ອມ, ການຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງບັນດາກິດຈະການຕ່າງໆ ພ້ອມທັງຊຸກຍູ້ການປະຕິບັດພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ຕິດພັນກັບບັນຫາມົນລະພິດ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ;
7. ເຜີຍແຜ່, ແນະນຳບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງປະຕິບັດກ່ຽວກັບວຽກງານສ່ວຍສາອາກອນຢູ່ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ຕາມກົດໝາຍ ແລະ ລະບຽບການໃນຂອບເຂດຄວາມຮັບຜິດຊອບ ຂອງວຽກງານສ່ວຍສາອາກອນ;
8. ຕິດຕາມ ແລະ ກວດກາ ການປະຕິບັດຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານທະບຽນການຄ້າ, ໃບອະນຸຍາດດຳເນີນທຸລະກິດ ແລະ ອື່ນໆ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
9. ຕິດຕາມ, ກວດກາການປະຕິບັດຫຼັກການ ແລະ ລະບຽບການ ຄຸ້ມຄອງວຽກງານໂທລະຄົມມະນາຄົມ, ອິນເຕີເນັດ, ຄວາມປອດໄພໄຊເບີ, ຄົ້ນຄວາມຖີ່ວິທະຍຸສື່ສານ ແລະ ໄປສະນີ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

10. ຕິດຕາມ, ກວດກາການປະຕິບັດຫຼັກການ ແລະ ລະບຽບການ ກ່ຽວກັບການເຄື່ອນໄຫວວຽກງານ ການຈາລະຈອນທາງນໍ້າ, ທາງອາກາດ, ສະໜາມບິນ, ຂົນສົ່ງ, ເຄຫາຜັງເມືອງ ແລະ ຂົວ-ທາງ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
11. ຕິດຕາມ, ກວດກາການປະຕິບັດຫຼັກການ ແລະ ລະບຽບການ ຄຸ້ມຄອງວຽກງານການສຶກສາ, ໃບອະນຸຍາດດໍາເນີນທຸລະກິດກ່ຽວກັບການຮຽນ-ການສອນ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
12. ຕິດຕາມ, ກວດກາການປະຕິບັດຫຼັກການ ແລະ ລະບຽບການ ຄຸ້ມຄອງວຽກງານສາທາລະນະສຸກ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
13. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງວຽກງານຂ່າວສານ, ວຽກງານວັດທະນະທໍາ ແລະ ວຽກງານທ່ອງທ່ຽວ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
14. ຕິດຕາມ, ກວດກາ ການເຂົ້າ-ອອກ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ປະສານງານກັບກະຊວງປ້ອງກັນຄວາມສະຫງົບ ໃນການຕິດຕາມ, ກວດກາ ການຄຸ້ມຄອງຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
15. ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຍຸຕິທໍາ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
16. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກະສິກໍາ ແລະ ປ່າໄມ້ ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
17. ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ, ການຄຸ້ມຄອງສະຖາບັນການເງິນ ແລະ ການຄຸ້ມຄອງລະບົບການຊໍາລະໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
18. ປັບປຸງ, ຕິດຕາມ, ກວດກາກົງຈັກການຈັດຕັ້ງ ແລະ ການກໍານົດຕໍາແໜ່ງງານ ຂອງຕົນ;
19. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄໍາ ມີຂອບເຂດສິດດັ່ງນີ້:

1. ກໍານົດນະໂຍບາຍ ແລະ ແຜນການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ເຕັກນິກການຮ່ວມມືກັບຄູ່ຮ່ວມພັດທະນາ ເພື່ອສະເໜີລັດຖະບານພິລະນາ;
2. ພົວພັນ, ປຶກສາຫາລື, ເຈລະຈາ ແລະ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄໍາ;
3. ຊີ້ນໍາບັນດາຂະແໜງທີ່ສັງກັດຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ເພື່ອໃຫ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນຢ່າງຮອບດ້ານ;

4. ບັນຈຸ, ຈັດວາງ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນ ພະນັກງານ-ລັດຖະກອນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ປະຕິບັດສິດອື່ນໆ ຕາມລະບຽບການ ແລະ ຕາມການມອບໝາຍ ຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄໍາ ມີກົງຈັກທີ່ປະຈໍາການ ປະກອບດ້ວຍຂະແໜງການວຽກງານດັ່ງນີ້:

1) ຂະແໜງສັງລວມ;
2) ຂະແໜງສົ່ງເສີມການລົງທຶນ;
3) ຂະແໜງສິ່ງແວດລ້ອມ;
4) ຂະແໜງແຮງງານ ແລະ ສະຫວັດດີການ-ສັງຄົມ;
5) ຂະແໜງ ການເງິນ;
6) ຂະແໜງ ອຸດສາຫະກໍາ ແລະ ການຄ້າ;
7) ຕົວແທນທະນາຄານແຫ່ງ ສປປ ລາວ;
8) ຂະແໜງ ໂຍທາທິການ ແລະ ຂົນສົ່ງ;
9) ຂະແໜງ ກະສິກໍາ ແລະ ປ່າໄມ້;
10) ກອງບັນຊາການປ້ອງກັນຄວາມສະຫງົບ;
11) ກອງບັນຊາການປ້ອງກັນປະເທດ;
12) ຂະແໜງ ພາຍໃນ;
13) ຂະແໜງ ຍຸຕິທໍາ;
14) ຂະແໜງ ການຕ່າງປະເທດ;
15) ສານປະຊາຊົນ;
16) ໄອຍະການປະຊາຊົນ;
17) ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ;
18) ຂະແໜງ ສຶກສາທິການ ແລະ ກິລາ;
19) ຂະແໜງ ສາທາລະນະສຸກ;
20) ຂະແໜງ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ປະກອບມີ:

1. ຫົວໜ້າອົງການ 01 ທ່ານ ມີຖານະທຽບເທົ່າ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ທັງເປັນຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ ແຂວງບໍ່ແກ້ວ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ໂດຍເຈົ້າແຂວງໆບໍ່ແກ້ວ ບົນພື້ນຖານ ການເຫັນດີຂອງ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ພາຍຫຼັງສະພາປະຊາຊົນແຂວງຮັບຮອງ, ມີໜ້າທີ່ຮັບຜິດຊອບຕໍ່ເຈົ້າແຂວງໆບໍ່ແກ້ວ ແລະ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຢູ່ພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ;
2. ຮອງຫົວໜ້າອົງການຈຳນວນໜຶ່ງ ມີຖານະທຽບເທົ່າຮອງເຈົ້າເມືອງ ຕາມການກຳນົດຕຳແໜ່ງງານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ໂດຍເຈົ້າແຂວງໆ ບໍ່ແກ້ວ ບົນພື້ນຖານ ການເຫັນດີຂອງ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ມີໜ້າທີ່ຮັບຜິດຊອບຊ່ວຍຫົວໜ້າອົງການ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ;
3. ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ອົງການຄຸ້ມຄອງ, ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບ ບັນຫາລວມຂອງອົງການຄຸ້ມຄອງ, ບໍລິຫານເຂດເສດຖະກິດສາມຫຼ່ຽມຄຳ;
2. ປະຕິບັດລະບອບຫົວໜ້າດຽວ, ມີການແບ່ງງານໃຫ້ບຸກຄົນຕາມຂະແໜງການຢ່າງລະອຽດ ແລະ ຈະແຈ້ງ;
3. ການເຄື່ອນໄຫວວຽກງານທັງໝົດຂອງ ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດສາມຫຼ່ຽມຄຳ ແມ່ນອີງໃສ່ລະບຽບກົດໝາຍ, ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບກະຊວງ, ອົງການຈັດຕັ້ງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆທີ່ກ່ຽວຂ້ອງ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມ 3 ເດືອນ 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານປົກກະຕິໃຫ້ຂັ້ນເທິງຂອງຕົນ;

4. ບັນດາຂະແໜງການຄົ້ນຄວ້າວຽກງານວິຊາສະເພາະຕ້ອງປະສານສົມທົບກັບສາຍຕັ້ງ ຂອງຕົນແລ້ວສະເໜີ ຫົວໜ້າອົງການຄຸ້ມຄອງ-ບໍລິການ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ພິຈາລະນາອະນຸມັດ ຕາມກົນໄກການບໍລິການປະຕູດຽວ;
5. ບັນດາຂະແໜງການ ສະຫຼຸບການເຄື່ອນໄຫວວຽກງານ ແລະ ລາຍງານສ່ອງແສງການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຫົວໜ້າອົງການຄຸ້ມຄອງ, ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ຢ່າງເປັນປົກກະຕິ;
6. ຫົວໜ້າ ອົງການຄຸ້ມຄອງ, ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ລາຍງານ ແລະ ຂໍທິດຊີ້ນໍາຕໍ່ອົງການປົກຄອງແຂວງບໍ່ແກ້ວ ແລະ ກະຊວງແຜນການ ແລະ ການລົງທຶນ ຕາມລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 9 ງົບປະມານ ແລະ ຕາປະທັບ

ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄໍາ ມີງົບປະມານ ແລະ ຕາປະທັບ ເປັນຂອງຕົນ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄໍາ ແລະ ຂະແໜງການທີ່ກ່ຽວຂ້ອງ ຜັນຂະຫຍາຍ ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ບຸກຄະລາກອນ ທີ່ໄປປະຈໍາການ ຢູ່ບັນດາຂະແໜງການ ແລະ ຫ້ອງການ ທີ່ກໍານົດໄວ້ໃນ ມາດຕາ 5 ຂອງດໍາລັດສະບັບນີ້ ໃຫ້ມີຄວາມລະອຽດ, ຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ການປະຕິບັດວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ, ບັນດາກະຊວງ, ຂະແໜງການກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງບໍ່ແກ້ວ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມດໍາລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດໍາລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປKS.

ນາຍົກລັດຖະມົນຕີ

**ທອງສິງ ທໍາມະວົງ** 